<u>ແຜນການສອນ:</u>

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 21 ມີນາ 2009 (03-21-2010)

---

## <u>ເມື່ອສະມາຊິກຢືນຢັນວ່າຕົນເອງຖືກ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (1 ໂກຣິນໂທ 8:1-4, 7-13; 10:31-33)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ແມ່ນກ່ຽວກັບຄວາມມີສິດເສຣີພາບ ແລະຄວາມຕ້ອງການຂອງຄຣິສຕຽນຜູ້ທີ່ມີຄວາມເຊື່ອ ທີ່ຈະສະແດງຄວາມຮັກ ດ້ວຍຄວາມດີ ແລະຄວາມຍິ່ງໃຫຍ່ຂອງພຣະເຈົ້າໃນຄວາມເຂົ້າໃຈ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ບົດຮຽນນີ້ມີຄວາມສຳຄັນຫລາຍ ເພາະວ່າຫລາຍຄັ້ງຄຣິສຕຽນພວກເຮົາມີປະກົດການຂອງການເຫັນແກ່ຕົວ, ຢືນຢັນວ່າຕົນເຮັດຖືກຕ້ອງ ໂດຍບໍ່ໄດ້ຄຳນຶງເຖິງ ການປະພຶດປະຕິບັດຂອງຕົນວ່າມັນສ້າງຄວາມກະທົບກະເທືອນຄົນອື່ນຢ່າງໃດ. ໝາຍຄວາມວ່າເຂົາບໍ່ໄດ້ຢຸດ ເພື່ອພິຈາຣະນາຕົນເອງວ່າ ການກະທຳຂອງຕົນຈະເປັນການສັຣເສີນຖວາຍກຽດແດ່ພຣະເຈົ້າຫືບໍ່. ບົດຮຽນນີ້ຈະໃຫ້ຂໍ້ແນະນຳແກ່ພວກເຮົາເຖິງໃຈຄວາມອັນສຳຄັນໃນພຣະຄັມພີ ເພື່ອເຮັດໃຫ້ພວກເຮົາມີຈິດໃຈກວ້າງຂວາງໃນການພິຈາຣະນາ ໃນການເສີມສ້າງຜູ້ໃດຜູ້ນຶ່ງຂຶ້ນມາເພື່ອໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ສາມາດຊ່ອຍທ່ານໃຫ້ປະຕິບັດຕົນ ທີ່ນຳຜົນປໂຍດໃຫ້ແກ່ຄົນອື່ນ ແລະເປັນການນຳສະງ່າຣາສີໃຫ້ກັບພຣະເຈົ້າ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- 

ແມ່ນຫຍັງຈະເກີດຂຶ້ນ ໃນເມື່ອສະມາຊິກໃນຄຣິສຕະຈັກບໍ່ຮູ້ຈັກຄວາມຈິງເຫລົ່ານີ້?

- ບົດຮຽນນີ້ຈະໄດ້ຊ່ວຍໃຫ້ພວກເຮົາຮູ້ເຖິງຄຣິສຕະຈັກທີ່ດຳເນີນໄປໃນທາງທີ່ຜິດ, ໃນເມື່ອສະມາຊິກໃນຄຣິສຕະຈັກທາກຍຶດໝັ້ນໃນທາງຂອງເຂົາເຈົ້າເອງ ເຂົາເຈົ້າຈະພຍາຍາມຝຶກຝົນບຸກບືນໄປທາງສິດເສຣີພາບໂດຍບໍ່ຄຳນຶງເຖິງວ່າການກະທຳຂອງເຂົາເຈົ້ານັ້ນມັນສະທ້ອນໄປເຖິງຜູ້ອື່ນນຳ.
- ບົ
ດຮຽນນີ້ຈະແນະນຳຫົວຂໍ້ໃຫຍ່ໃຈຄວາມສຳລັບສິດເສຣີພາບໃນການສ້າງຄົນອື່ນໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າໄດ້.

## 1. <u>ຍອມຢູ່ໃນກົດຣະບຽບ:</u> (1 ໂກຣິນໂທ 8:1-3)

- ຂໍ
ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 8:1-3
- ນຳພານັກຮຽນໄປເວົ້າເຖິງເຣື່ອງ "ອາຫານທີ່ຖວາຍແກ່ພຣະທຽມ"
- ແມ່ນຫຍັງທີ່ເປັນກົດຣະບຽບຂອງຄົນທົ່ວໄປໃນເຣື່ອງການຕັດສິນໃຈວ່າ ຈະໄປໃສ, ຈະເຮັດຫຍັງ, ຫລືຈະກິນຫຍັງ? ກົດຣະບຽບທີ່ໄດ້ຕົກລົງກັນໄວ້ຂອງຄຣິສຕຽນໃນເມືອງໂກຣິນໂທນັ້ນຄືແນວໃດ?
- ເຂົາເຈົ້າໄດ້ຢືນຢັນເຖິງສິດເສຣີພາບຂອງເຂົາເຈົ້າຢ່າງບໍ່ຈຳກັດ ແລະໄດ້ປະຕິເສດສິດເສຣີພາບຂອງຄົນອື່ນຢ່າງໃດ?

## <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (1 ໂກຣິນໂທ 8:1-3)

1. ຄຣິສຕຽນຊາວເມືອງໂກຣິນໂທຊອກຫາຕັດສິນກ່າວໂທດແກ່ຜູ້ທີ່ກິນອາຫານທີ່ບູຊາແກ່ພະທຽມແນວໃດ? ທ່ານໂປໂລໄດ້ເຮັດໃຫ້ຄວາມອວດອົ່ງທະນົງຕົວຂອງເຂົາລົດນ້ອຍລົງໄດ້ແນວໃດ?
2. ຄວາມຮູ້ໄດ້ເຮັດໃຫ້ຜູ້ທີ່ມີຄວາມຮູ້ອວດຕົວແນວໃດແດ່? ແມ່ນຫຍັງທີ່ຄວບຄຸມຄວາມຮູ້?
3. ໃນຄວາມຮູ້ນັ້ນໄດ້ເຮັດໃຫ້ເຂົາເຈົ້າບັງຄັບຂົ່ມເຫັງຄົນອື່ນແນວໃດ? ຄຣິສຕຽນທຸກມື້ນີ້ ຄວນຈະເຮັດແນວໃດໃນເມື່ອຮູ້ເຣື່ອງນີ້ແລ້ວ? ພວກເຮົາຈະທຳລາຍຄວາມຮູ້ທີ່ອວດຕົວນີ້ຢ່າງໃດ?
4. ທ່
ານໄດ້ມອງເຫັນ ຄວາມອວດຕົວໂດຍຄວາມຮູ້ ແລະຄຣິສຕຽນຜູ້ທີ່ສ້າງຄົນອື່ນດ້ວຍຄວາມຮັກເປັນແນວໃດ?
5. ຮູ
ບພາບອັນໃດທີ່ເປັນການປະຈົບປະແຈງຫລາຍກວ່າ? ຮູບພາບອັນໃດທີ່ພວກເຮົາສາມາດເອົາມາພັລນາເປັນຂໍ້ສລຸບໄດ້?

## 2. <u>ຈົ່ງຫລີກໜີຈາກສິ່ງທີ່ຖ່ວງດຶງຄວາມຈະເຣີນ:</u> (1 ໂກຣິນໂທ 8:4,7-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 8:4,7-13
- ບົດສົນທະນາ: ເປັນດ້ວຍເຫດໃດ ຄຣິສຕຽນບາງຄົນຈຶ່ງມີຄວາມເຂັ້ມແຂງ ຫລືອ່ອນເພັຽ ແລະຈະເຣີນເຕີບໂຕ ຫລືບໍ່ຈະເຣີນເຕີບໂຕ. ເຮັດແນວໃດຈຶ່ງຈະເອົາສິ່ງເຫລົ່ານີ້ມາໝູນໃຊ້ໃນຄຣິສຕະຈັກ ໃຫ້ສົນທະນາກັນໃນເຣື່ອງນີ້.

- 
  ແມ່ນຫຍັງທີ່ຄຣິສຕຽນຜູ້ທີ່ເຂັ້ມແຂງຮູ້ ແລະແມ່ນຫຍັງທີ່ເຂົາເຈົ້າໄດ້ເຮັດແນວໃດກ່ຽວກັບຄວາມຮູ້ນັ້ນ?
- ຖ້າຜູ້ທີ່ເຊື່ອຮູ້ວ່າການກິນອາຫານທີ່ບູຊາແກ່ພະທຽມນັ້ນຜິດແລະເປັນບາບແລ້ວ ຄວນພິຈາຣະນາຢ່າງໃດ?
- 
  ເປັນຫຍັງຄຣິສຕຽນຜູ້ທີ່ອ່ອນແອຈຶ່ງບໍ່ມີຄວາມຮູ້ສຶກຢ່າງດຽວກັນກັບຄຣິສຕຽນຜູ້ທີ່ເຂັ້ມແຂງມີ? ເຂົາໄດ້ເປັນບາບບໍ່ໃນເມື່ອເຂົາເຈົ້າກິນອາຫານທີ່ບູຊາແກ່ພະທຽມນັ້ນ? ເປັນເພາະເຫດໃດ?
- 
  ທ່ານໂປໂລຊີ້ໃຫ້ເຫັນວ່າມົນທິນນັ້ນບໍ່ໄດ້ຢູ່ທີ່ອາຫານ. ແຕ່ແມ່ນສິ່ງທີ່ອອກມານັ້ນນຳຜູ້ທີ່ເຊື່ອໄປເຖິງຄວາມຜິດບາບ. ພວກເຮົາຄວນຈະເຮັດແນວໃດຕໍ່ສິ່ງເຫລົ່ານັ້ນ?
- 
  ແມ່ນຫຍັງຈະເກີດຂຶ້ນກັບຄຣິສຕຽນຜູ້ມີຄວາມອ່ອນແອ ຖ້າຫາກຄຣິສຕຽນຜູ້ເຂັ້ມແຂງບໍ່ເຫັນດີໃນຄວາມຖືກຕ້ອງແລະສິດເສຣີພາບຂອງເຂົາເຈົ້າ?
- 
  ເຮັດແນວໃດພວກເຮົາຈຶ່ງຈະສະແດງອອກ ພ້ອມການກະທຳວ່າອັນໃດເປັນສິ່ງສຳຄັນ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ໂກຣິນໂທ 8:4,7-13)

1. ເຫດຜົນອັນໃດທີ່ຄຣິສຕະຈັກໂກຣິນໂທໄດ້ພິສູດເຖິງການກິນຊີ້ນທີ່ເອົາໄປບູຊາພະທຽມແລ້ວ? ເຫດຜົນອັນໃດທີ່ທ່ານໂປໂລໃຊ້ບອກວ່າເຂົາເຈົ້າບໍ່ຄວນກິນ?
2. ພຣະເຈົ້າໄດ້ເປັນຫ່ວງນຳການທີ່ຄຣິສຕຽນເມືອງໂກຣິນໂທກິນ ຫລືອຸປນິສັຍໃນການກິນຂອງເຂົາເຈົ້າບໍ່?
3. ໃນເມື່ອພວກເຮົາຢືນຢັນວ່າພວກເຮົາຖືກຕ້ອງຂອງພວກເຮົາເອງ ມັນໄດ້ເຮັດໃຫ້ຄົນອື່ນເຈັບປວດບໍ່?

3 . **<u>ເຮັດທຸກສິ່ງເພື່ອຖວາຍກຽດພຣະເຈົ້າ:</u>** (1 ໂກຣິນໂທ 10:31-33)

- ທ່ານໂປໂລໄດ້ສລຸບການສົນທະນາຂອງຄຣິສຕຽນດ້ວຍສິດເສຣີພາບໂດຍຫຍໍ້ຊຶ່ງສະແດງເຖິງຄວາມເປັນກາງ.
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 10:31-33
- 
  ເປົ້າໝາຍຕົ້ນຕໍສິດເສຣີແລະການກະທຳຂອງຄຣິສຕຽນຄື ຖວາຍກຽດແດ່ພຣະເຈົ້າ ແລະທຳດີຕໍ່ຄົນອື່ນ.
- 
  ຖ້າຄຣິສຕຽນໃຊ້ສິດທິພົນໂດຍເວົ້າວ່າ "ນີ້ເປັນຄວາມຖືກຕ້ອງຂອງຂ້າພະເຈົ້າ" ນີ້ແມ່ນນິສັຍແນວໃດ?
- 
  ໃຫ້ນຳພານັກຮຽນຖອດຖອນຄວາມໃນຂໍ້ທີ 31 ເພື່ອສະທ້ອນໃຫ້ເຫັນໃຈຄວາມຂອງອິສຣະພາບທີ່ຄຣິສຕຽນກຳລັງປະເຊີນຢູ່ທຸກວັນນີ້.
- ຄຣິສຕະຈັກດຳເນີນໄປໃນທາງທີ່ຜິດໃນເມື່ອສະມາຊິກຫາກຢືນຢັນຢູ່ໃນທາງຂອງຕົນເອງ. ແຕ່ເຮັດໃຫ້ຖືກຕ້ອງເປັນທັມຄືໃຫ້ສະມາຊິກທຸກຄົນຍຶດໝັ້ນຢູ່ໃນທາງຂອງພຣະເຈົ້າ.

- ຈົ່ງເຮັດທຸກສິ່ງເພື່ອເປັນການຖວາຍກຽດແດ່ພຣະເຈົ້າ ນີ້ເປັນຄຳສັ່ງ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 1 ໂກຣິນໂທ 10:31-33

1. ທ່ານໂປໂລໄດ້ອອກຄຳສັ່ງໃຫ້ແກ້ໄຂພິດຂອງຄວາມເຫັນແກ່ຕົວ ແລະການຕໍ່ສູ້ຂັດແຍ້ງກັນໃນຄຣິສຕະຈັກແນວໃດ?
2. ແມ່ນຫຍັງທີ່ບັນດາຜູ້ທີ່ເຊື່ອຄວນເຮັດໃຫ້ມີຄວາມຈູງໃຈຫລາຍຂຶ້ນ?
3. ເຮັດຢ່າງໃດຈະໃຫ້ມີຄວາມຊື່ນຊົມຍິນດີໃນສິດເສຣີພາບອັນດີທີ່ສຸດໄດ້?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ຄຣິສຕຽນຄວນສະແດງຄວາມຮັກຕໍ່ຄົນອື່ນໂດຍການຍອມເສັຽສລະສິດທິສ່ວນຕົວຊຶ່ງຈະນຳຄຣິສຕຽນຜູ້ທີ່ທຳບາບກັບມາໄດ້.
- ຄຣິສຕຽນຄວນຈະເປັນຄົນລອບຄອບ ລະມັດລະວັງ ບໍ່ແມ່ນເປັນກ້ອນຫີນທີ່ເຮັດໃຫ້ຂູນສະດຸດ.
- ຄຣິສຕຽນບໍ່ຄວນເອົາກ້ອນຫີນມາຂວາງທາງໃຫ້ຜູ້ທີ່ຍັງບໍ່ທັນເຊື່ອຂູນສະດຸດ, ແຕ່ຄວນຊອກຫາຊ່ອງທາງແບ່ງປັນຂ່າວປະເສີດໃຫ້ເຂົາເຈົ້າດ້ວຍຄວາມຮັກ.
- ຄຣິສຕຽນຄວນເຮັດທຸກສິ່ງໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**